**ບົດສັງລວມໂຄງການຫຍໍ້**

**ໂຄງການສຶກສາສຳຫຼວດຄວາມເປັນໄປໄດ້ ໃນການລົງທຶນພັດທະນາທີ່ດິນດອນກາງຂອງ, ເມືອງສັງທອງ, ນະຄອນຫຼວງວຽງຈັນ ຂອງບໍລິສັດ ເຊວຈິນ ວິສະວະກຳ ແລະ ກໍ່ສ້າງ ຈຳກັດ.**

*ທີ່ສະເໜີຕໍ່ : ກອງປະຊຸມເຈົ້າຄອງ-ຮອງເຈົ້າຄອງ ຮ່ວມກັບພະແນກການ, ອົງການລັດທຽບເທົ່າພະແນກ ຂັ້ນ ນະຄອນຫຼວງວຽງຈັນ ແລະ ເມືອງທີ່ກ່ຽວຂ້ອງ ຄັ້ງທີ 42 ສະໄໝ VII, ຄັ້ງວັນທີ 25 ພະຈິກ 2024*

*ຮຽນ : - ທ່ານ ເຈົ້າຄອງ, ນະຄອນຫຼວງວຽງຈັນ, ທີ່ເຄົາລົບ ແລະ ນັບຖືຢ່າງສູງ;*
*– ທ່ານ ຮອງເຈົ້າຄອງ, ນະຄອນຫຼວງວຽງຈັນ, ທີ່ເຄົາລົບ ແລະ ນັບຖືຢ່າງສູງ;*
*– ບັນດາທ່ານ ເຈົ້າເມືອງ, ຫົວໜ້າພະແນກ, ຮອງພະແນກ ທີ່ນັບຖືຢ່າງສູງ;*

ພະແນກແຜນການ ແລະ ການລົງທຶນ, ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນນະຄອນຫຼວງວຽງຈັນ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານກ່ຽວກັບໂຄງການສຶກສາສຳຫຼວດຄວາມເປັນໄປໄດ້ ໃນການລົງທຶນພັດທະນາທີ່ດິນດອນກາງຂອງ, ເມືອງສັງທອງ, ນະຄອນຫຼວງວຽງຈັນ ຂອງບໍລິສັດ ເຊວຈິນ ວິສະວະກຳ ແລະ ກໍ່ສ້າງ ຈຳກັດ, ມີລາຍລະອຽດດັ່ງລຸ່ມນີ້:

## I. <u>ສະພາບລວມຂອງໂຄງການ:</u>

ບໍລິສັດ ເຊວຈິນ ວິສະວະກຳ ແລະ ກໍ່ສ້າງ ຈຳກັດ, ເປັນບໍລິສັດທີ່ຈົດທະບຽນ ແລະ ເຄື່ອນໄຫວດຳເນີນທຸລະກຳພາຍໃຕ້ກົດໝາຍຂອງ ສປປ ລາວ ຖືໃບທະບຽນວິສາຫະກິດ ສະບັບເລກທີ 1615/ຈທວ, ລົງວັນທີ 28 ກໍລະກົດ 2022, ມີທີ່ຕັ້ງສຳນັກງານຢູ່ບ້ານດອນກອຍ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ; ມີທຶນຈົດທະບຽນ 50.000.000.000 ກີບ; ໂດຍແມ່ນທ່ານ LEE SEOKSEUNG; ສັນຊາດເກົາຫຼີໃຕ້; ອາຊີບນັກທຸລະກິດ; ເປັນຜູ້ອຳນວຍການບໍລິສັດ. ບໍລິສັດດັ່ງກ່າວ, ໄດ້ຍື່ນໜັງສືສະເໜີຂໍສຳປະທານດອນກາງຂອງ, ບ້ານດອນກາງຂອງ, ເມືອງສັງທອງ, ນະຄອນຫຼວງວຽງຈັນ ນຳ ອົງການປົກຄອງ ນະຄອນຫຼວງວຽງຈັນ . ຕໍ່ກັບບັນຫາດັ່ງກ່າວ ນະຄອນຫຼວງວຽງຈັນ ໄດ້ຄົ້ນຄວ້າ ແລະ ເຫັນດີໃຫ້ບໍລິສັດດັ່ງກ່າວ ສຶກສາ, ສຳຫຼວດ ແລະ ອອກແບບແຜນຜັງຄວາມເປັນໄປໄດ້ໃນການພັດທະນາ ແລະ ປົກປັກຮັກສາດອນດັ່ງກ່າວ ຕາມແຜນພັດທະນາທິດທາງລວມຂອງນະຄອນຫຼວງວຽງຈັນ ແລ້ວຈຶ່ງນຳສະເໜີ ລັດຖະບານ ຮັບຮອງໃນການພັດທະນາດອນດັ່ງກ່າວ.

ມາໃນວັນທີ 02 ມິຖຸນາ 2023 ອົງການປົກຄອງ ນະຄອນຫຼວງວຽງຈັນ ຕາງໜ້າໂດຍພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ ເພື່ອສຶກສາ, ສຳຫຼວດ-ອອກແບບຄວາມເປັນໄປໄດ້ໃນການລົງທຶນພັດທະນາທີ່ດິນດອນກາງຂອງ, ເມືອງສັງທອງ, ນະຄອນຫຼວງວຽງຈັນ ກັບ ບໍລິສັດ ເຊວຈິນ ວິສະວະກຳ ແລະ ກໍ່ສ້າງ ຈຳກັດ, ມີອາຍຸຂອງບົດບັນທຶກຄວາມເຂົ້າໃຈ 12 ເດືອນ ( 02 ມິຖຸນາ 2023- 02 ມິຖຸນາ 2024) ແລະ ຕໍ່ MOU (ຄັ້ງທີ 1) 6 ເດືອນ ຮອດວັນທີ 02 ທັນວາ 2024.

## II. <u>ການຈັດຕັ້ງປະຕິບັດໂຄງການ.</u>

ພາຍຫຼັງເຊັນບົດບັນທຶກຄວາມເຂົ້າໃຈ, ນະຄອນຫຼວງວຽງຈັນ ໄດ້ອອກຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບລົງສຶກສາສຳຫຼວດ-ອອກແບບ ຄວາມເປັນໄປໄດ້ໃນການພັດທະນາໂຄງການດັ່ງກ່າວ ຮ່ວມກັບບໍລິສັດ (ຕາມຂໍ້ຕົກລົງ ສະບັບເລກທີ 593/ຈນວ,ລົງວັນທີ 07 ມິຖຸນາ 2023), ດັ່ງກ່າວ ໂດຍແມ່ນ ທ່ານຮອງຫົວໜ້າ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ເປັນຫົວໜ້າຄະນະ, ທ່ານ ຮອງເຈົ້າ ເມືອງສັງທອງ ເປັນຮອງຫົວໜ້າຄະນະ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມເປັນຄະນະ.

ຈາກນັ້ນ, ໃນວັນທີ 10 ຕຸລາ 2024 ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນໄດ້ສົມທົບກັບ ພະແນກການກ່ຽວຂ້ອງ, ເມືອງສັງທອງ, ກອງບັນຊາການທະຫານ, ຫ້ອງການ ປກຊ-ປກສ ນະຄອນຫຼວງວຽງຈັນ ເປີດກອງປະຊຸມຄົ້ນຄວ້າ ແລະ ປຶກສາຫາລືກ່ຽວກັບການລາຍງານຜົນຂອງການສຶກສາສຳຫຼວດຄວາມເປັນໄປໄດ້ ແລະ ສະເໜີຂໍກ້າວເຂົ້າສູ່ຂັ້ນຕອນການເຈລະຈາສັນຍາສຳປະທານ ໂຄງການສຶກສາ, ສຳຫຼວດ-ອອກແບບ ຄວາມເປັນໄປໄດ້ໃນການລົງທຶນພັດທະນາທີ່ດິນດອນກາງຂອງ, ເມືອງສັງທອງ, ນະຄອນຫຼວງວຽງຈັນຂອງບໍລິສັດ ເຊວຈີນ ວິສະວະກຳ ແລະ ກໍ່ສ້າງ ຈຳກັດ. ຜ່ານການຮັບຟັງການລາຍງານ, ກອງປະຊຸມໄດ້ຕົກລົງເປັນເອກະພາບກັນດັ່ງນີ້:

1) ສະແດງຄວາມຊົມເຊີຍຕໍ່ ບໍລິສັດ ເຊວຈີນ ວິສະວະກຳ ແລະ ກໍ່ສ້າງ ຈຳກັດ ທີ່ໄດ້ເອົາໃຈໃສ່ສຶກສາສຳຫຼວດຄວາມເປັນໄປໄດ້ໂຄງການດັ່ງກ່າວ ເຊິ່ງເຫັນວ່າສຳເລັດຫຼາຍໜ້າວຽກສົມຄວນ ເປັນຕົ້ນແມ່ນ:
   (1) ສຳເລັດການລົງໄປສຳຫຼວດພື້ນທີ່ ແລະ ກຳນົດຂອບເຂດຂອງໂຄງການ ພ້ອມທັງຂໍ້ມູນປະຊາຊົນທີ່ຖືກຜົນກະທົບຈາກໂຄງການ ເຊິ່ງມີເນື້ອທີ່ທັງໝົດ 452 ເຮັກຕາ ກັບ 9,004 ຕາແມັດ, ມີຈຳນວນຕອນດິນທີ່ຖືກຜົນກະທົບທັງໝົດ 934 ຕອນ (ຕາມບົດລາຍງານ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ສະບັບເລກທີ 2978/ພຊສ.ນວ, ລົງວັນທີ 26 ມີນາ 2024);
   (2) ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ໄດ້ສຳເລັດການຄິດໄລ່ມູນຄ່າຊົດເຊີຍຂອງໂຄງການສຳເລັດແລ້ວ ເຊິ່ງມີມູນຄ່າທັງໝົດ 109,259,878,892 ກີບ (ຕາມບົດລາຍງານສະບັບເລກທີ 8789/ພຊສ.ນວ, ລົງວັນທີ 09 ກັນຍາ 2024);
   (3) ບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການ ໄດ້ຮັບຮອງຈາກ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ (ຕາມໃບຮັບຮອງສະບັບເລກທີ 514/ຖວທ.ນວ, ລົງວັນທີ 20 ກັນຍາ 2024);
   (4) ສຳເລັດການອອກແບບແຜນຜັງລວມຂອງໂຄງການ ໄດ້ຮັບຮອງຈາກພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ (ຕາມໃບຮັບຮອງ ສະບັບເລກທີ 10156/ຍທຂ.ນວ, ລົງວັນທີ 07 ຕຸລາ 2024);
   (5) ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ໄດ້ສະເໜີຫາ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລ້ວ, ກຳລັງຢູ່ໃນຂັ້ນຕອນການພິຈາລະນາຮັບຮອງ;
2) ເຫັນດີໃຫ້ລາຍງານຫາ ທ່ານ ເຈົ້າຄອງ ນະຄອນຫຼວງວຽງຈັນ ເພື່ອສະເໜີຫາລັດຖະບານ ພິຈາລະນາຂໍກ້າວເຂົ້າສູ່ຂັ້ນຕອນການເຈລະຈາສັນຍາສຳປະທານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

## III. <u>ການຄົ້ນຄວ້າ ຂອງ ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ</u>

1) ພື້ນຖານແມ່ນສະແດງຄວາມຊົມເຊີຍຕໍ່ ບໍລິສັດ ເຊວຈີນ ວິສະວະກຳ ແລະ ກໍ່ສ້າງ ຈຳກັດ ທີ່ໄດ້ເອົາໃຈໃສ່ສຶກສາສຳຫຼວດຄວາມເປັນໄປໄດ້ ໂຄງການດັ່ງກ່າວ ເຊິ່ງເຫັນວ່າສຳເລັດຫຼາຍໜ້າວຽກສົມຄວນ, ໂດຍອີງຕາມ ມາດຕາ 5 ຂໍ້ 5.2 ຂອງບົດບັນທຶກຄວາມເຂົ້າໃຈ ເຫັນວ່າ: ບໍລິສັດ ເຊວຈີນ ວິສະວະກຳ ແລະ ກໍ່ສ້າງ ຈຳກັດ ໄດ້ສຳເລັດທຸກພັນທະ ແລະ ໜ້າວຽກທີ່ຂອງຝ່າຍບໍລິສັດ ທີ່ກຳນົດໃນບົດບັນທຶກຄວາມເຂົ້າໃຈແລ້ວ;
2) ປັດຈຸບັນພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ໄດ້ເຮັດບົດລາຍງານຫາ ທ່ານ ເຈົ້າຄອງ ນະຄອນຫຼວງວຽງຈັນ (ຕາມບົດລາຍງານ ສະບັບເລກທີ 807/ພຜທ.ຫລປ.ນວ, ລົງວັນທີ 01 ພະຈິກ 2024) ເພື່ອສະເໜີໃຫ້ລາຍງານຫາລັດຖະບານ ຕໍ່ກັບຜົນຂອງການສຶກສາສຳຫຼວດຄວາມເປັນໄປໄດ້ຂອງໂຄງການ ເພື່ອພິຈາລະນາກ້າວເຂົ້າສູ່ຂັ້ນຕອນການເຈລະຈາສັນຍາສຳປະທານ ຕາມທີ່ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍເຂດຍຸດທະສາດປ້ອງກັນຊາດ ສະບັບເລກທີ 111/ນຍ, ລົງວັນທີ 24 ມີນາ 2011 ເນື່ອງຈາກປັດຈຸບັນໂຄງການດັ່ງກ່າວແມ່ນສຶກສາສຳຫຼວດໂຄງການສຳເລັດ ແລະ ມີຂໍ້ມູນທີ່ລະອຽດຊັດເຈນແລ້ວ ຄື:

(1) ຂອບເຂດພື້ນທີ່ຂອງໂຄງການ ມີເນື້ອທີ່ທັງໝົດ 452 ເຮັກຕາ ກັບ 9,004 ຕາແມັດ, ມີຈໍານວນຕອນດິນປະຊາຊົນທີ່ຖືກຜົນກະທົບທັງໝົດ 934 ຕອນ;

(2) ມູນຄ່າຊົດເຊີຍຂອງໂຄງການສໍາເລັດແລ້ວ ເຊິ່ງມີມູນຄ່າທັງໝົດ 109,259,878,892 ກີບ;

(3) ບົດວິພາກເສດຖະກິດ-ເຕັກນິກຂອງໂຄງການ ໄດ້ຮັບຮອງຈາກ ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ, ເຊິ່ງໂຄງການດັ່ງກ່າວ ແມ່ນຈະພັດທະນາເປັນເຂດກະສິກໍາສະອາດເປັນມິດກັບສິ່ງແວດລ້ອມ ຕິດພັນກັບການບໍລິການ ແລະ ການທ່ອງທ່ຽວ, ມີມູນຄ່າການລົງທຶນທັງໝົດ 200,000,000 ໂດລາສະຫະລັດ, ກິດຈະການທີ່ຈະລົງທຶນປະກອບມີ: ເຂດຜະລິດກະສິກໍາ, ປູກຝັງ ແລະ ລ້ຽງສັດ, ເຂດບ້ານປະຊາຊົນ, ເຂດສະໜາມກ໊ອບ, ເຂດສູນກິລາສາກົນ, ເຂດສວນສາທາລະນະ, ເຂດສູນການຄ້າ ແລະ ການບໍລິການ, ເຂດທີ່ພັກອາໄສ;

(4) ແບບແຜນຜັງລວມຂອງໂຄງການ ໄດ້ຮັບຮອງຈາກພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ;

**ມາຮອດນີ້, ການລາຍງານຂອງຂ້າພະເຈົ້າ** ກ່ຽວກັບໂຄງການສຶກສາສໍາຫຼວດຄວາມເປັນໄປໄດ້ ໃນການລົງທຶນພັດທະນາທີ່ດິນດອນກາງຂອງ, ເມືອງສັງທອງ, ນະຄອນຫຼວງວຽງຈັນ ຂອງບໍລິສັດ ເຊວຈິນ ວິສະວະກໍາ ແລະ ກໍ່ສ້າງ ຈໍາກັດ ກໍໄດ້ສິ້ນສຸດລົງແລ້ວ, ສະເໜີຂໍທິດຊີ້ນໍາຕາມເຫັນສົມຄວນດ້ວຍ. ຂໍຂອບໃຈ,